ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 062 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 05/08/2020

# ແຈ້ງເຊີນປະຊຸມ

**ເຖິງ :** ບັນດາທ່ານຫົວໜ້າ ບໍລິສັດ ສ້ອມແປງ ແລະ ຕິດຕັ້ງໄຟຟ້າ ໃນ ສປປ ລາວ

**ເລື່ອງ :** ແຈ້ງເຊີນປະມູນການຮັບເໝົາບຳລຸງຮັກສາຈັກປັ່ນໄຟຟ້າ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາທ່ານ ເພື່ອເຂົ້າຮ່ວມປະມູນການບຳລຸງຮັກສາຈັກປັ່ນໄຟຟ້າຂອງ ທຄຕລ ທົ່ວລະບົບ ປະຈຳສົກປີ 2020-2023 ເຊິ່ງການປະມູນຈະໄດ້ຈັດຂຶ້ນ ໃນວັນພະຫັດ ທີ 20/08/2020 ເວລາ 09:30 ໂມງ ທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ຕຶກ C ຊັ້ນ 3 ໂດຍມີລາຍລະອຽດ ດັ່ງນີ້:

1. **<u>ລາຍລະອຽດໜ້າວຽກ</u>**:
   - ບຳລຸງຮັກສາຈັກປັ່ນໄຟຟ້າ ທົ່ວລະບົບ ທຄຕລ ຈຳນວນ 52 ໜ່ວຍ

**ຕາຕະລາງສັງລວມ ຈັກປັ່ນໄຟ ທົ່ວລະບົບ 2020**

| ລ/ດ | ທີ່ຕັ້ງ | | ຂະໜາດ | ຈຳນວນ | ໝາຍເຫດ(ຍີ່ຫໍ້) |
|---|---|---|---|---|---|
| | ທີ່ຕັ້ງ | ແຂວງ | KVA | | |
| 1 | ສຳນັກງານໃຫຍ່ | ນະຄອນຫຼວງ | 500 | 1 | MAX WELL |
| 2 | ສຳນັກງານໃຫຍ່ | | 300 | 1 | MAX WELL |
| 3 | ສາຂາ ດົງໂດກ | | 55 | 1 | DALE Elexctric |
| 4 | ໜ່ວຍບໍລິການ ຮ່ອງແກ | | 60 | 1 | DENYO |
| 5 | ສາຂາ ໂພນໂຮງ | ແຂວງ ວຽງຈັນ | 30 | 1 | DENYO |
| 6 | ໜ່ວຍບໍລິການ ຫຼັກ 52 | | 55 | 1 | LEEGA CUMMINS |
| 7 | ໜ່ວຍບໍລິການ ເມືອງທຸລະຄົມ | | 30 | 1 | LEEGA CUMMINS |
| 8 | ໜ່ວຍບໍລິການ ຊະນະຄາມ | | 30 | 1 | LEEGALUMMINS |
| 9 | ສາຂາ ວັງວຽງ | | 125 | 1 | MAX WELL |
| 10 | ໜ່ວຍບໍລິການ ເມືອງເຟືອງ | | 50 | 1 | MAX WELL |
| 11 | ໜ່ວຍບໍລິການ ກາສີ | | 55 | 1 | MAX WELL |
| 12 | ສາຂາ ໄຊຍະບູລີ | ໄຊຍະບູລີ | 132 | 1 | SDMO |
| 13 | ໜ່ວຍບໍລິການ ປາກລາຍ | | 55 | 1 | MAX WELL |
| 14 | ໜ່ວຍບໍລິການ ຫົງສາ | | 55 | 1 | DENYO |
| 15 | ໜ່ວຍບໍລິການ ແກ່ນທ້າວ | | 50 | 1 | MAX WELL |

| | | | | | |
|---|---|---|---|---|---|
| 16 | ສາຂາ ຊຽງຂວາງ | ຊຽງຂວາງ | 132 | 1 | KOHLER SDMO |
| 17 | ໜ່ວຍບໍລິການ ເມືອງຄຳ | | 55 | 1 | MAX WELL |
| 18 | ສາຂາ ຫົວພັນ | ຫົວພັນ | 100 | 1 | MAX WELL |
| 19 | ໜ່ວຍບໍລິການ ສົບເບົາ | | 30 | 1 | MAX WELL |
| 20 | ສາຂາ ຫຼວງພະບາງ | ຫຼວງພະບາງ | 55 | 1 | MAX WELL |
| 21 | ສາຂາ ອຸດົມໄຊ | ອຸດົມໄຊ | 50 | 1 | MAX WELL |
| 22 | ໜ່ວຍບໍລິການ ເມືອງ ນາໝໍ້ | | 50 | 1 | MAX WELL |
| 23 | ໜ່ວຍບໍລິການ ເມືອງຮຸນ | | 33 | 1 | MAX WELL |
| 24 | ສາຂາ ຫຼວງນ້ຳທາ | ຫຼວງນ້ຳທາ | 55 | 1 | MAX WELL |
| 25 | ໜ່ວຍບໍລິການ ເມືອງສິງ | | 50 | 1 | MAX WELL |
| 26 | ໜ່ວຍບໍລິການ ບໍ່ເຕັນ | | 50 | 1 | MAX WELL |
| 27 | ໜ່ວຍບໍລິການ ຫ້ວຍຊາຍ | ບໍ່ແກ້ວ | 55 | 1 | MAX WELL |
| 28 | ໜ່ວຍບໍລິການ ຕົ້ນເຜີ້ງ | | 30 | 1 | MAX WELL |
| 29 | ສາຂາ ຜົ້ງສາລີ | ຜົ້ງສາລີ | 50 | 1 | DENYO |
| 30 | ໜ່ວຍບໍລິການ ບຸນເໜືອ | | 50 | 1 | MAX WELL |
| 31 | ໜ່ວຍບໍລິການ ເມືອງຂວາ | | 50 | 1 | MAX WELL |
| 32 | ໜ່ວຍບໍລິການ ບຸນໃຕ້ | | 30 | 1 | MAX WELL |
| 33 | ໜ່ວຍບໍລິການ ຫຼັກ 20 | ບໍລິຄຳໄຊ | 50 | 1 | MAX WELL |
| 34 | ໜ່ວຍບໍລິການ ທາງແບ່ງນ້ຳທອນ | | 50 | 1 | MAX WELL |
| 35 | ສາຂາ ຄຳມ່ວນ | ຄຳມ່ວນ | 150 | 1 | LEEGA CUMMINS |
| 36 | ໜ່ວຍບໍລິການ ຍົມມະລາດ | | 60 | 1 | DENYO |
| 37 | ໜ່ວຍບໍລິການ ຫີນບູນ | | 30 | 1 | LEEGA CUMMINS |
| 38 | ສາຂາ ສະຫວັນນະເຂດ | ສະຫວັນນເຂດ | 60 | 1 | DENYO |
| 39 | ໜ່ວຍບໍລິການ ວິລະບູລີ | | 50 | 1 | MAX WELL |
| 40 | ໜ່ວຍບໍລິການ ຊາຍແດນລາວ-ບາວ | | 30 | 1 | DENKO SILENT |
| 41 | ສາຂາ ປາກເຊ | ຈຳປາສັກ | 60 | 1 | DENYO |
| 42 | ໜ່ວຍບໍລິການ ນາກະສັງ ເມືອງໂຂງ | | 30 | 1 | DENYO |
| 43 | ໜ່ວຍບໍລິການ ປາເຊ | | 60 | 1 | DENYO |
| 44 | ໜ່ວຍບໍລິການ ສຸນຫຼັກ 8 ເມືອງປາກເຊ | | 50 | 1 | PERKINS |
| 45 | ສາຂາ ສະລະວັນ | ສາລະວັນ | 150 | 1 | HARBINGER START GEN |
| 46 | ໜ່ວຍບໍລິການ ຕະຫຼາດນາເຫຼັກ | | 60 | 1 | DENYO |
| 47 | ໜ່ວຍບໍລິການ ເລົ່າງາມ | | 30 | 1 | MAX WELL |
| 48 | ໜ່ວຍບໍລິການ ເມືອງຄົງ | | 50 | 1 | MAX WELL |
| 49 | ສາຂາ ເຊກອງ | ເຊກອງ | 250 | 1 | MAX WELL |
| 50 | ໜ່ວຍບໍລິການ ທ່າແຕງ | | 60 | 1 | MAX WELL |
| 51 | ໜ່ວຍບໍລິການ ດາກຈຶງ | | 30 | 1 | LEEGA CUMMINS |
| 52 | ສາຂາ ອັດຕະປື | ອັດຕະປື | 132 | 1 | SDMO |
| **ລວມ** | | | | **52** | |

- ໜ້າວຽກຂອງຜູ້ຮັບເໝົາ ມີຄື:
    1. ຜູ້ຮັບເໝົາຕ້ອງລົງກວດກາ ແລະ ບໍາລຸງຮັກສາຈັກປັ່ນໄຟຟ້າ ທຸກໆ 4 ເດືອນ (3 ຄັ້ງ/ປີ)
    2. ກວດກາຄວາມພ້ອມໃນການໃຊ້ງານດ້ານເຕັກນິກຕ່າງໆຂອງຈັກ
    3. ປ່ຽນຖ່າຍນໍ້າມັນເຄື່ອງ
    4. ປ່ຽນໝໍ້ກອງນໍ້າມັນ
    5. ປ່ຽນໝໍ້ກອງອາກາດ

    ສ່ວນການປ່ຽນອຸປະກອນອື່ນໆ ແມ່ນໃຫ້ອີງຕາມການໃຊ້ງານຕົວຈິງ ແລະ ຄວາມເໝາະສົມ.

2. **ລາຍລະອຽດການປະກອບເອກະສານ:**

➢ **ເອກະສານ ຊອງທີ 1 (ບໍ່ປິດຊອງ):**

- ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດໃຫ້ບໍລິການບໍາລຸງຮັກສາຈັກປັ່ນໄຟຟ້າ, ຕ້ອງມີວິຊາການກ່ຽວທີ່ຊໍານານຕໍ່ການບໍາລຸງຮັກສາຈັກປັ່ນໄຟຟ້າດັ່ງກ່າວໂດຍສະເພາະ ແລະ ມີປະສົບການຢ່າງໜ້ອຍ 05 ປີຂຶ້ນໄປ (ສໍາເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການເສຍອາກອນ ປະຈໍາປີ 2019) ພ້ອມໃບຢັ້ງຢືນຜົນງານ ແລະ ປະສົບການທີ່ຜ່ານມາ.
- ກໍານົດຍື່ນຊອງແມ່ນວັນທີ 14/08/2020 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

➢ **ເອກະສານ ຊອງທີ 2 (ປິດຊອງ):**

- ໃບສະເໜີລາຄາ 1 ຊຸດ, ການສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%.
- ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸຂອງໜັງສືຄໍ້າປະກັນແມ່ນ ວັນທີ 20/09/2020) ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.
- ກໍານົດຍື່ນຊອງລາຄາແມ່ນວັນທີ 20/08/2020 ເວລາ 9:30 ໂມງ ທີ່ຫ້ອງປະຊຸມຊັ້ນ 3 ອາຄານ C (ເປີດຊອງລາຄາຊ່ອງໜ້າກັບຄະນະກໍາມະການຂອງ ທຄຕລ).

**ໝາຍເຫດ: ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ຜູ້ທີ່ຊະນະການປະມູນ ແມ່ນບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ ແຕ່ຈະວັດຈາກ ປະສົບການ ແລະ ຄວາມຊໍານານງານພ້ອມ.
- ການຊໍາລະແບ່ງຈ່າຍເປັນ 06 ງວດເທົ່າກັນ (2 ງວດຕໍ່ປີ) ຫຼື ທັງໝົດ 36 ເດືອນ ດັ່ງລຸ່ມນີ້:

    ➢ <u>ປີທີ 1</u>:

    * ງວດທີ 1: ຊໍາລະລ່ວງໜ້າ 6 ເດືອນຕົ້ນປີ (ຊໍາລະໃນເດືອນ ທີ 1 ເມື່ອເລີ່ມປະຕິບັດບໍາລຸງຮັກສາ)

* ງວດທີ 2: ຊຳລະລ່ວງໜ້າ 6 ເດືອນທ້າຍປີ (ຊຳລະໃນເດືອນ ທີ 6 ຂອງການບຳລຸງຮັກສາ)

- <u>ປີທີ 2</u>:

* ງວດທີ 3: ຊຳລະລ່ວງໜ້າ 6 ເດືອນຕົ້ນປີ (ຊຳລະໃນເດືອນ ທີ 12 ຂອງການບຳລຸງຮັກສາ)

* ງວດທີ 4: ຊຳລະລ່ວງໜ້າ 6 ເດືອນທ້າຍປີ (ຊຳລະໃນເດືອນ ທີ 18 ຂອງການບຳລຸງຮັກສາ)

- <u>ປີທີ 3</u>:

* ງວດທີ 5: ຊຳລະລ່ວງໜ້າ 6 ເດືອນຕົ້ນປີ (ຊຳລະໃນເດືອນ ທີ 24 ຂອງການບຳລຸງຮັກສາ)

* ງວດທີ 6: ຊຳລະລ່ວງໜ້າ 6 ເດືອນທ້າຍປີ (ຊຳລະໃນເດືອນ ທີ 30 ຂອງການບຳລຸງຮັກສາ)

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**ອຳນວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບັນທະລາດ ແກ້ວປະເສີດ

<u>ຜູ້ປະສານ:</u>
ທ່ານ ເພັດສະໝອນ
ເບີໂທ: 020 77467722

ນ. ວິໄລພອນ
ເບີໂທ: 020 54562466

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ 062/ທຄຕລ, ລົງວັນທີ 05/08/2020 (ຍື່ນຊອງບໍ່ເກີນ ວັນທີ 14/08/2020)

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ໃບອະນຸຍາດເປັນຕົວແທນ | ປະສົບການໃນການເຮັດວຽກ | ໜ້າວຽກ | ໄລຍະບໍາລຸງຮັກສາ |
| 1 | ບ/ສ ABC | ✓ (999/ 02.01.2015) | 2019 | ✓ (ໃຫ້ລະບຸ) | ✓ (ໃຫ້ລະບຸ) | 5 ປີ | (ໃຫ້ລະບຸລະອຽດ) | 3 ປີ |

ນະຄອນຫຼວງວຽງຈັນ, ວັນທີ
ຜູ້ອໍານວຍການບໍລິສັດ

ຜູ້ປະສານງານ
ເບີໂທ: